ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ເລກທີ 559/ຈຂ.ຊຍ

ໄຊຍະບູລີ, ວັນທີ 04/6/2020

# ຂໍ້ຕົກລົງ
# ວ່າດ້ວຍ ກອງທຶນສົ່ງເສີມກະສິກຳຍືນຍົງ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງສປປລາວ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກ III, ໝວດທີ 4, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ເລກທີ 01/98.ສພຊ, ລົງວັນທີ 10 ຕຸລາ 1998, ໝວດທີ IV ການສົ່ງເສີມການຜະລິດ ກະສິກຳ, ມາດຕາ 50 ທຶນ ແລະ ກອງທຶນສົ່ງເສີມ;
- ອີງຕາມ ມະຕິຂອງກອງປະຊຸມ ສະພາປະຊາຊົນແຂວງໄຊຍະບູລີ ກ່ຽວກັບການຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍກອງທຶນສົ່ງເສີມກະສິກຳຍືນຍົງ, ສະບັບເລກທີ 034./ສພຂ.ຊຍ, ລົງວັນທີ 31 ມັງກອນ 2020.

## ເຈົ້າແຂວງໄຊຍະບູລີຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບ ການຄຸ້ມຄອງ ກອງທຶນສົ່ງເສີມກະສິກຳຍືນຍົງ. ແນ່ໃສ ການລະດົມ, ຂົນຂວາຍ ແລະ ສະສົມທຶນ, ເພື່ອຊຸກຍູ້ສົ່ງເສີມ ການຜະລິດກະສິກຳເປັນສິນຄ້າ ຂອງ ບັນດາ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ ດ້ານກະສິກຳ ໃຫ້ມີຄວາມຍືນຍົງ.

**ມາດຕາ 2 ນິຍາມ**

ກອງທຶນສົ່ງເສີມກະສິກຳຍືນຍົງ ແມ່ນກອງທຶນລວມໝູ່ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທີ່ສ້າງຂຶ້ນເພື່ອສະສົມທຶນ, ຈາກການປະກອບສ່ວນຕາມກຳນົດ, ຄວາມສະໝັກໃຈ ຂອງ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳຢູ່ພາຍໃນແຂວງໄຊຍະບູລີ, ເພື່ອຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າໃຫ້ຫຼາຍ ແລະ ມີຄວາມຍືນຍົງ.